Washington State
Department of Social & Health Services

DDA Developmental Disabilities Administration

# Developmental Disabilities Administration ການຕີຣາຄາປະເມີນຜົນ

ລາຍລະອຽດກ່ຽວກັບການບໍຣິການແລະການອູ້ມຊູສຳລັບບຸກຄົນຜູ້ທີ່ມີຄວາມເສັຽອົງຄະດ້ານຄວາມຈະເຣີນເຕີບໂຕ

## ຄຳແນະນຳມາສູ່ການຕີຣາຄາປະເມີນຜົນຂອງພະແນກ DDA:

ການຕີຣາຄາປະເມີນຜົນຂອງພະແນກ DDA ໄດ້ຖືກອອກແບບມາເພື່ອຈະຄົ້ນຫາຄວາມຕ້ອງການໃນການອູ້ມຊູສ່ວນບຸກຄົນຂອງແຕ່ລະຄົນຜູ້ທີ່ຖືກຕີຣາຄາປະເມີນຜົນເບິ່ງ.

ການຕີຣາຄາປະເມີນຜົນຂອງພະແນກ DDA ຈະຊ່ວຍຜູ້ຈັດການເອກະສານໃຫ້ວາງແຜນການບໍຣິການ ແລະ ການອູ້ມຊູເພື່ອຈະຕອບສະນອງຄວາມຕ້ອງການຂອງບຸກຄົນຜູ້ທີ່ມີຄວາມເສັຽອົງຄະດ້ານຄວາມຈະເຣີນເຕີບໂຕ.

ສະພາຂອງຣັດຕ້ອງທຳການຕັດສິນກ່ຽວກັບການໃຫ້ເງິນທຶນ ແລະ ເຄື່ອງມືຊ່ວຍເຫລືອສຳລັບການບໍຣິການສຳລັບບຸກຄົນຜູ້ທີ່ມີຄວາມເສັຽອົງຄະດ້ານຄວາມຈະເຣີນເຕີບໂຕ. ເມື່ອໃດຄວາມຕ້ອງການຂອງບຸກຄົນທຸກໆຢ່າງໄດ້ຖືກຕີຣາຄາປະເມີນຜົນເບິ່ງແລ້ວດ້ວຍເຄື່ອງມືຕີຣາຄາປະເມີນຜົນແນວດຽວກັນ, ສະພາ ແລະ ຜູ້ທຳການຕັດສິນຄົນອື່ນໆຄ້າຍຄືຫລາຍກວ່າວ່າຈະພົບເຫັນລາຍລະອຽດວ່າຈະອີງໃສ່ໄດ້ ແລະ ໃຊ້ການໄດ້ຫລາຍໃນການດຳເນີນການທຳການຕັດສິນ.

## ການຕີຣາຄາປະເມີນຜົນຂອງພະແນກ DDA ຊ່ວຍບຸກຄົນຜູ້ທີ່ມີຄວາມເສັຽອົງຄະດ້ານຄວາມຈະເຣີນເຕີບໂຕໄດ້ຢ່າງໃດ?

ການຕີຣາຄາປະເມີນຜົນຂອງພະແນກ DDA ຈະວັດແທກການອູ້ມຊູສ່ວນບຸກຄົນຂອງແຕ່ລະຄົນທີ່ຕ້ອງການເພື່ອຈະເຂົ້າຮ່ວມໃນກິດຈະກຳການເຄື່ອນໄຫວຫລາຍໆຢ່າງ. ນອກຈາກນັ້ນອີກ, ມັນຈະວັດແທກການອູ້ມຊູຂອງບຸກຄົນທີ່ຕ້ອງການໃນເຣື່ອງກ່ຽວກັບການປະພຶດ, ວຽກງານ, ການປິ່ນປົວພະຍາບານ, ແລະ ຄວາມຕ້ອງການໃນຜູ້ໃຫ້ການເບິ່ງແຍງດູແລ. ການຕີຣາຄາປະເມີນຜົນຂອງພະແນກ DDA ຈະພິຈາຣະນາເບິ່ງວ່າໂຄງການໃດ ແລະ ການບໍຣິການແນວໃດທີ່ບຸກຄົນມີເງື່ອນໄຂໄດ້ຮັບ, ແລະ ການບໍຣິການຫລາຍເທົ່າໃດທີ່ເຂົາເຈົ້າສາມາດຖືກອະນຸມັດໃຫ້ໄດ້ຮັບ.

## ແມ່ນໃຜແດ່ຈະມີສ່ວນໃນການຕີຣາຄາປະເມີນຜົນຂອງພະແນກ DDA?

ຜູ້ຈັດການເອກະສານຈະພົບຫນ້າຕໍ່ຫນ້ານຳບຸກຄົນຜູ້ທີ່ມີຄວາມເສັຽອົງຄະດ້ານຄວາມຈະເຣີນເຕີບໂຕ ແລະ ຢ່າງຫນ້ອຍຄົນອື່ນອີກຄົນນຶ່ງຜູ້ທີ່ຮູ້ຈັກລູກຄ້າດີ. ຜູ້ຕາງຫນ້າຕາມກົດຫມາຍຈະຖືກເຊື້ອເຊີນມາສະເມີໃຫ້ມາຮ່ວມ.

## ການຕີຣາຄາປະເມີນຜົນຈະໃຊ້ເວລາດົນປານໃດ?

ການສຳພາດການຕີຣາຄາປະເມີນຜົນໂດຍທົ່ວໄປແລ້ວຈະໃຊ້ເວລາ 2 ຫາ 4 ຊົ່ວໂມງຂຶ້ນນຳຂໍ້ມູນຫລາຍໆຢ່າງ. ຕົວຢ່າງ, ການຕີຣາຄາປະເມີນຜົນເທື່ອທຳອິດຈະໃຊ້ເວລານານກວ່າການທວນຄືນ. ຖ້າຫາກວ່າບຸກຄົນຍັງຕ້ອງການການບໍຣິການ Medicaid Personal Care (ການເບິ່ງແຍງດູແລສ່ວນຕົວຂອງເມດີເຄດ໌) ອີກຄືກັນ, ການຕີຣາຄາປະເມີນຜົນຈະໃຊ້ເວລາຕື່ມອີກ.

## ການຕີຣາຄາປະເມີນຜົນຂອງພະແນກ DDA ຈະເກີດຂຶ້ນດົນປານໃດເທື່ອນຶ່ງ?

ບຸກຄົນຜູ້ທີ່ໄດ້ຮັບການບໍຣິການທີ່ຖືກຈ່າຍເງິນໃຫ້ຈະໄດ້ຮັບການຕີຣາຄາປະເມີນຜົນຢ່າງຫນ້ອຍແຕ່ລະປີ. ຖ້າຫາກວ່າຄວາມຕ້ອງການຂອງບຸກຄົນປ່ຽນແປງໃນລະຫວ່າງປີ, ມັນອາດຈະມີຄວາມຕ້ອງການສຳລັບການຕີຣາຄາປະເມີນຜົນເບິ່ງໃຫມ່.

## ແມ່ນຫຍັງຈະເກີດຂຶ້ນຖ້າຫາກວ່າບຸກຄົນບໍ່ຕ້ອງການການຕີຣາຄາປະເມີນຜົນ?

ຖ້າຫາກວ່າບຸກຄົນບໍ່ຕ້ອງການການຕີຣາຄາປະເມີນຜົນຂອງພະແນກ DDA ແລະ ອາສັຍຢູ່ໃນຊຸມນຸມຊົນ, ມັນຈະຍາກທີ່ຈະຮູ້ຈັກວ່າການອູ້ມຊູແນວໃດແມ່ນຕ້ອງການ. ບຸກຄົນຈະປະຕິເສດການຕີຣາຄາປະເມີນຜົນແຕ່ວ່າພະແນກ DDA ບໍ່ສາມາດອະນຸມັດການບໍຣິການໃຫ້ໄດ້ໂດຍປາສຈາກການຕີຣາຄາປະເມີນຜົນຂອງພະແນກ DDA.

## ແມ່ນຫຍັງແດ່ປະກອບໃນການຕີຣາຄາປະເມີນຜົນຂອງພະແນກ DDA?

ມັນມີຢູ່ສາມພາກສ່ວນ, ຫລື ແບບວິທີການ, ໃນການຕີຣາຄາປະເມີນຜົນຂອງພະແນກ DDA:

1. **ແບບວິທີການຕີຣາຄາປະເມີນຜົນເບິ່ງການອູ້ມຊູ**

   ແບບວິທີການຕີຣາຄາປະເມີນຜົນເບິ່ງການອູ້ມຊູລວມເອົາຕາຕະລາງຄວາມເຂັ້ມຂົ້ນໃນການອູ້ມຊູ (SIS) ສໍາລັບລູກຄ້າທຸກໆຄົນອາຍຸ 16 ປີ ແລະ ແກ່ກວ່າ. SIS ແມ່ນເຄື່ອງມືທີ່ຖືກຮັບຮູ້ທົ່ວປະເທດຊຶ່ງຖືກນໍາໃຊ້ຢູ່ໃນຫລາຍໆຣັດເພື່ອຈະວັດແທກຄວາມຕ້ອງການນໍາການອູ້ມຊູຂອງບຸກຄົນຜູ້ທີ່ມີຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕ. ແວ່ເຂົ້າເບິ່ງ https://siswebsite.org/ ໄດ້ເພື່ອຈະຮຽນຮູ້ເພີ້ມເຕີມກ່ຽວກັບ SIS.

   ສໍາລັບເດັກນ້ອຍອາຍຸຕ່ໍາກວ່າ 16 ປີ, ຄໍາຖາມຊາວຄໍາຖາມຊຸດນຶ່ງຈະຖືກໃຊ້ເພື່ອຈະວັດແທກຄວາມຕ້ອງການນໍາການອູ້ມຊູຂອງເຂົາເຈົ້າ.

   ແບບວິທີການຕີຣາຄາປະເມີນຜົນເບິ່ງການອູ້ມຊູຍັງຈະລວມເອົາການຕີຣາຄາປະເມີນຜົນເບິ່ງຄວາມຕ້ອງການຂອງຜູ້ເບິ່ງແຍງດູແລ,ບັນຫາເຣື່ອງການປະພຶດ ແລະ ການຄວບຄຸມປ້ອງກັນ.

2. **ແບບວິທີການຕີຣາຄາປະເມີນຜົນເບິ່ງຣະດັບຂອງການບໍຣິການ**

   ແບບວິທີການຕີຣາຄາປະເມີນຜົນເບິ່ງຣະດັບຂອງການບໍຣິການໄດ້ຖືກໃຊ້ເພື່ອຈະຕີຣາຄາປະເມີນຜົນເບິ່ງການອູ້ມຊູທີ່ຕ້ອງການສໍາລັບກິດຈະກໍາການດໍາຣົງຊີວິດປະຈໍາວັນ ແລະ ການເບິ່ງແຍງດູແລສ່ວນຕົວ. ຄໍາຕອບຕໍ່ຄໍາຖາມເຫລົ່ານີ້ຈະຊ່ວຍເຫລືອຜູ້ຈັດການເອກະສານພິຈາຣະນາເບິ່ງການບໍຣິການເບິ່ງແຍງດູແລສ່ວນຕົວທີ່ບຸກຄົນຈະໄດ້ຮັບ.

3. **ແຜນການອູ້ມຊູສ່ວນບຸກຄົນ**

   ແຜນການອູ້ມຊູສ່ວນບຸກຄົນ (ISP) ບອກຣາຍຣະອຽດການອູ້ມຊູທີ່ຄວນຈະມີໄວ້ໃຫ້ເພື່ອຈະຊ່ວຍຕອບສະນອງຄວາມຕ້ອງການຂອງບຸກຄົນ. ISP ບັນຣະຍາຍວ່າການບໍຣິການທີ່ຖືກຈ່າຍເງິນໃຫ້ຫລາຍປານໃດທີ່ບຸກຄົນມີເງື່ອນໄຂທີ່ຈະໄດ້ຮັບ, ແລະ ແມ່ນໃຜຈະເອົາການບໍຣິການໃຫ້. ແຜນການຍັງຈະຊີ້ບອກການອູ້ມຊູທີ່ບຸກຄົນມີຢູ່ຊຶ່ງຣັດບໍ່ຈ່າຍເງິນໃຫ້.ແຜນການອັນນີ້ຈະຖືກຕີພິມອອກມາ ແລະ ເອົາໃຫ້ລູກຄ້າຫລັງຈາກການຕີຣາຄາປະເມີນຜົນ ແລະ ການວາງແຜນ.

## ການຕີຣາຄາປະເມີນຜົນຂອງພະແນກ DDA ການພິຈາຣະນາບອກໄດ້ແນວໃດວ່າການບໍຣິການແນວໃດທີ່ບຸກຄົນມີເງື່ອນໄຂທີ່ຈະໄດ້ຮັບ?

ຄໍາຕອບຕໍ່ຄໍາຖາມຢູ່ໃນແບບວິທີການຕີຣາຄາປະເມີນຜົນເບິ່ງການອູ້ມຊູ ແລະ ແບບວິທີການຕີຣາຄາປະເມີນຜົນເບິ່ງຣະດັບຂອງການບໍຣິການເຮັດໃຫ້ເກີດມີສິ່ງທີ່ຖືກເອີ້ນວ່າ "ຄະແນນຄວາມຮ້າຍແຮງ". ຄະແນນຄວາມຮ້າຍແຮງເປັນສິ່ງວັດແທກຄວາມຫນັກແຫນ້ນຂອງຄວາມຕ້ອງການນໍາການອູ້ມຊູຂອງບຸກຄົນປຽບທຽບໃສ່ບຸກຄົນອື່ນຜູ້ທີ່ໄດ້ຖືກຕີຣາຄາປະເມີນຜົນແລ້ວ. ຄະແນນຄວາມຮ້າຍແຮງຂອງບຸກຄົນຈາກການຕີຣາຄາປະເມີນຜົນຂອງເຂົາເຈົ້າຊ່ວຍພິຈາຣະນາບອກເງື່ອນໄຂໄດ້ຮັບໂຄງການ ແລະ ການບໍຣິການເຊັ່ນວ່າ:

- *ການເບິ່ງແຍງດູແລສ່ວນຕົວ*
- *ການບໍຣິການຢູ່ຕາມເຮືອນ ແລະ ຊຸມນຸມຊົນຂອງ DDA*
- *ການປິ່ນປົວລໍຖ້າເສັຽຊີວິດ*
- *ການບໍຣິການສ່ວນບຸກຄົນ ແລະ ຄອບຄົວ*
- *ການບໍຣິການຢູ່ຕາມເຮືອນ*
- *ໂຄງການວຽກງານ ແລະ ການເຂົ້າເຖິງຊຸມນຸມຊົນ*

## ຖ້າຫາກວ່າຄົນໃດຄົນນຶ່ງບໍ່ເຫັນພ້ອມນໍາຜົນອອກມາຂອງການຕີຣາຄາປະເມີນຜົນຂອງພະແນກ DDA ເດ?

ຖ້າຫາກວ່າຄົນໃດຄົນນຶ່ງບໍ່ເຫັນພ້ອມນໍາຜົນອອກມາຂອງການຕີຣາຄາປະເມີນຜົນຂອງພະແນກ DDA, ການອຸທອນສາມາດຖືກຍື່ນໄດ້. ຜູ້ຈັດການເອກະສານຈະເອົາຣາຍຣະອຽດໃຫ້ໃນເວລາພົບກັນເຣື່ອງການຕີຣາຄາປະເມີນຜົນກ່ຽວກັບສິດທີໃນການອຸທອນສໍາລັບຄໍາຕັດສິນຂອງກົມອີງໃສ່ການຕີຣາຄາປະເມີນຜົນຂອງພະແນກ DDA.

**ຖ້າຫາກວ່າຂ້າພະເຈົ້າມີຄໍາຖາມເພີ້ມເຕີມເດ?**

*ຈົ່ງໂທຫາຜູ້ຈັດການເອກະສານຂອງທ່ານ ຫລື ແວ່ເຂົ້າປັຽມແວບໄຊທ໌ການຕີຣາຄາປະເມີນຜົນຂອງພະແນກ DDA ໄດ້ທີ່:* **www.dshs.wa.gov/ddd/CAP.shtml**